ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ກອງປະຊຸມຂະບວນການວິຊາການ ລະຫວ່າງ ຄະນະບໍລິຫານງານຊາວໜຸ່ມ ທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ



ໃນຕອນບ່າຍຂອງວັນທີ 17 ສິງຫາ 2023, ທີ່ຫ້ອງປະຊຸມໃຫຍ່ (ຊັ້ນ 7) ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມວິຊາການ ລະຫວ່າງ ຄະນະບໍລິຫານງານຊາວໜຸ່ມ ທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ ຂຶ້ນ. ໂດຍການໃຫ້ກຽດເປັນປະທານກອງປະຊຸມຂອງ ສະຫາຍ ບຸນທະວີ ສຸກດາວົງ ຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມ ທະນາຄານແຫ່ງ ສປປ ລາວ, ຫົວໜ້າກົມພິມຈຳໜ່າຍ ທະນາຄານແຫ່ງ ສປປ ລາວ ແລະ ໃຫ້ກຽດເປັນປະທານຮ່ວມໂດຍ ສະຫາຍ ສົມຈິດ ຄຳມຸງຄຸນ ເລຂາທິການສູນກາງ, ເລຂາຄະນະບໍລິຫານງານຊາວໜຸ່ມ ປະຊາຊົນ ປະຕິວັດລາວ ກະຊວງການເງິນ ຊຶ່ງກອງປະຊຸມໄດ້ມີຜູ້ເຂົ້າຮ່ວມຈາກຫຼາຍພາກສ່ວນເປັນຕົ້ນແມ່ນຄະນະບໍລິຫານງານຊາວໜຸ່ມ ທຫລ, ບັນດາໜ່ວຍຊາວໜຸ່ມພາຍໃນຮາກຖານ ທຫລ, ຄະນະບໍລິຫານງານຊາວໜຸ່ມ ກະຊວງການເງິນ ເຂົ້າຮ່ວມຢ່າງພ້ອມພຽງກັນ.

**ຈຸດປະສົງຂອງການດຳເນີນກອງປະຊຸມວິຊາການ ລະຫວ່າງ ຄະນະບໍລິຫານງານຊາວໜຸ່ມ ທະນາ ຄານແຫ່ງ ສປປ ລາວ ແລະ ກະຊວງການເງິນ** ໃນຄັ້ງນີ້ເພື່ອເປັນການສ້າງຂະບວນການຂ່ຳນັບຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 55 ປີ ດ້ວຍການເຜີຍແຜ່ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານວິຊາສະເພາະ ໂດຍໄດ້ສຸມໃສ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາ ໃນໄລຍະທີ່ປະເທດຊາດພວກເຮົາກຳລັງປະເຊີນກັບສິ່ງທ້າທາຍທີ່ໜັກໜ່ວງຈາກສະພາບການຜັນປ່ຽນຂອງສະພາບເສດຖະກິດສາກົນ ຊຶ່ງໄດ້ສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມຕໍ່ພື້ນຖານສະພາບເສດຖະກິດຂອງ ສປປ ລາວ ໂດຍສະເພາະແມ່ນອັດຕາແລກປ່ຽນ ຊຶ່ງກະທົບຕໍ່ສະເຖຍລະພາບເງິນຕາແຫ່ງຊາດ ກໍຄືຄ່າຄອງຊີບຂອງປະຊາຊົນລາວບັນດາເຜົ່າ.

ທັງສອງພາກສ່ວນຍັງໄດ້ນຳສະເໜີແລກປ່ຽນວິຊາສະເພາະເປັນຕົ້ນແມ່ນ:  1) ວຽກງານຄຸ້ມຄອງລະບົບການຊຳລະຂອງທຫລ; 2) ວຽກງານຫັນການເກັບລາຍຮັບງົບປະມານຂອງກະຊວງການເງິນ  (ລະບົບ  FINLINK); 3) ວຽກງານການປັບປຸງວິສາຫະກິດ.



ຜ່ານການເຜີຍແຜ່ເຫັນວ່າສະມາຊິກຊາວໜຸ່ມທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ມີຄວາມຮັບຮູ້  ແລະ  ເຂົ້າໃຈວຽກງານວິຊາສະເພາະດັ່ງກ່າວ ແລະ ສາມາດນຳໄປຈັດຕັ້ງຜັນຂະຫຍາຍໃນໜ້າທີ່ວຽກງານຂອງຕົນໄດ້ຢ່າງມີປະສິດທິພາບ  ແລະ ມີປະສິດທິຜົນ.



ກອງປະຊຸມໄດ້ດຳເນີນເປັນເວລາເຄິ່ງວັນ ແລະ ປິດລົງດ້ວຍຜົນສຳເລັດອັນຈົບງາມ  ຫຼັງຈາກນັ້ນກໍໄດ້ເຂົ້າຢ້ຽມຊົມຫ້ອງວາງສະແດງຂອງທະນາຄານແຫ່ງ ສປປ ລາວ.



**ຂ່າວ ແລະ ພາບໂດຍ: ສອນໄຊ ສີຫາເທບ+ສົມພົດ ທຳມະວົງ**

*ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງຮ່ວມໃຈນຳໃຊ້ເງິນກີບ*